## ມິຊຊາວັນອາທິດທີ 1 ມັງກອນ 2023
## ສົມໂພດພຣະນາງມາຣີອາມານດາພຣະເຈົ້າ



**ພຣະວໍລະສານໂດຍນັກບຸນລູກາ 2, 16-21**

ໃນເວລານັ້ນ, ພວກຊຸມພາບານໄດ້ພາກັນຮີບໄປແລະພົບເຫັນພຣະນາງມາຣີອາ, ນັກບຸນຢໍແຊແລະກຸມານນ້ອຍນອນຢູ່ໃນຮາງຫຍ້າ. ເມື່ອໄດ້ພົບເຫັນແລ້ວ ພວກເຂົາກໍພາກັນເລົ່າລືເລື່ອງລາວທີ່ໄດ້ຍິນໄດ້ຟັງກ່ຽວກັບກຸມານນີ້. ພວກທີ່ໄດ້ຍິນໄດ້ຟັງເລື່ອງທີ່ພວກຊຸມພາບານເລົ່ານັ້ນ ກໍພາກັນແປກປະຫລາດໃຈ. ສ່ວນພຣະນາງມາຣີອານັ້ນ, ພຣະນາງໄດ້ຮັກສາຂໍ້ຄວາມນີ້ໄວ້ ແລະຮໍາເພິງພິຈາລະນາຢູ່ໃນໃຈ. ພວກຊຸມພາບານກໍພາກັນຫລົບເມືອ ພ້ອມທັງຍໍຍ້ອງສັນລະເສີນພຣະເປັນເຈົ້າ ຍ້ອນສິ່ງທີ່ໄດ້ຍິນແລະໄດ້ເຫັນຕາມຂ່າວທີ່ໄດ້ຮັບນັ້ນ.

ເມື່ອພຣະກຸມານບັງເກີດມາໄດ້ແປດວັນແລ້ວ, ກໍເຖິງວັນຮັບສິນຕັດ, ພຣະກຸມານຈຶ່ງໄດ້ຮັບພຣະນາມວ່າ “ເຢຊູ” ຕາມທີ່ເທວະດາໄດ້ບອກໄວ້ກ່ອນ, ພຣະອົງຈະປະຕິສົນໃນອຸທອນຂອງພຣະມານດາ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ໃນວັນຂຶ້ນຕົ້ນປີໃໝ່ນີ້, ສິ່ງທີ່ພວກເຮົາຈະກະທຳແລະຈະກ່າວກ່ອນອື່ນໝົດແມ່ນຄຳອວຍພອນປີໃໝ່. ແລະຄຳອວຍພອນທີ່ສວຍງາມທີ່ສຸດໃນວາຈາພຣະເຈົ້າໃນວັນຂຶ້ນປີໃໝ່ນີ້ແມ່ນໃນໜັງສືສຳມະໂນຊຶ່ງພວກເຮົາໄດ້ຟັງໃນບົດອ່ານທີໜຶ່ງກ່າວວ່າ: “ຂໍພຣະອົງເຈົ້າຊົງອວຍພຣະພອນແລະຮັກສາເຈົ້າເຖີດ. ຂໍພຣະອົງເຈົ້າສຳແດງພຣະພັກອັນຮຸ່ງເຮືອງຂອງພຣະອົງ ແລະປະທານພຣະຄຸນໃຫ້ເຈົ້າເຖີດ. ຂໍພຣະອົງເຈົ້າຫັນພຣະພັກມາແລະປະທານສັນຕິສຸກໃຫ້ເຈົ້າເຖີດ”. (ສມນ 6, 24-26). ເປັນຄຳອວຍພອນທີ່ພຣະເຈົ້າບອກສອນຜ່ານທາງໂມແຊແລະອາອາຣອນຜູ້ເປັນສົງຂອງພຣະອົງ. ເພື່ອພວກເຂົາຈະໄດ້ໃຊ້ວາຈາພຣະເຈົ້ານີ້ອວຍພອນປະຊາກອນຂອງພຣະອົງ. ເນື້ອຫາຂອງຄຳອວຍພອນນີ້ສະທ້ອນໃຫ້ເຫັນວ່າ ພຣະພອນທີ່ປະເສີດທີ່ສຸດຊຶ່ງມະນຸດປາດຖະໜາຄືການໄດ້ເຫັນພຣະພັກຂອງພຣະເຈົ້າ. ວັນນີ້, ພຣະເຈົ້າກໍໄດ້ປະທານພຣະພອນອັນປະເສີດນີ້ໃຫ້ມະນຸດຜ່ານທາງການບັງເກີດມາຂອງພຣະບຸດພຣະອົງ. ເພາະຜູ້ໃດເຫັນພຣະບຸດກໍແມ່ນເຫັນພຣະບິດາ. ແລະອາໄສພຣະບຸດນີ້, ມະນຸດຈຶ່ງໄດ້ກາຍເປັນບຸດບຸນທຳຂອງພຣະເຈົ້າ ແລະຮຽກພຣະອົງວ່າ: “ບິດາ”. ດັ່ງທີ່ນັກບຸນເປົາໄດ້ກ່າວໃນບົດອ່ານທີສອງວັນນີ້ໃນຈົດໝາຍຫາຊາວກາລາຊີອາ.

ສ່ວນໃນພຣະວໍລະສານ, ພວກເຮົາເຫັນວ່າຜູ້ຄົນທີ່ໄດ້ພົບເຫັນພຣະເຢຊູເຈົ້າທີ່ນແພນອນໃນຮາງຫຍ້ານັ້ນແມ່ນບັນດາຜູ້ຕໍ່ານ້ອຍຄືພວກລ້ຽງແກະ. ເມື່ອພວກເຂົາໄດ້ເຫັນພຣະເຢຊູພຣະບຸດພຣະເຈົ້າແລ້ວພວກເຂົາກໍມີຄວາມຍິນດີແລະຮ້ອງສັນລະເສີນພຣະເຈົ້າ.ຈາກນັ້ນ, ພວກເຂົາກໍນຳຄວາມຍິນດີນີ້ໄປປະກາດໃຫ້ຄົນອື່ນໄດ້ຮູ້ແລະໄດ້ຍິນດີຮ່ວມກັບພວກເຂົາ. ສ່ວນພຣະນາງມາຣີອາມານດາຂອງພຣະເຢຊູກໍໄດ້ເກັບຮັກສາຄວາມຍິນດີນີ້ໄວ້ໃນໃຈ.

ສິ່ງທີ່ກ່າວມານີ້ຊ່ວຍພວກເຮົາໃຫ້ເຂົ້າໃຈວ່າຄວາມຍິນດີແລະພຣະພອນທີ່ປະເສີດທີ່ສຸດສຳລັບມະນຸດຄືການໄດ້ເພັ່ງຊົມໃບໜ້າຂອງພຣະເຈົ້າແລະຢູ່ຮ່ວມກັບພຣະອົງ.

**ພາວະນາ**

ໂອພຣະເຈົ້າ ຂໍໃຫ້ວັນຂຶ້ນປີໃໝ່ນີ້ຈົ່ງເປັນວັນຍິນດີສຳລັບພວກລູກທຸກຄົນ ຍ້ອນພວກລູກໄດ້ພົບເຫັນໃບໜ້າຂອງພຣະເຈົ້າຜ່ານທາງກຸມານນ້ອຍທີ່ນແພນອນໃນຮາງຫຍ້າ. ແລະແມ່ນກຸມານນີ້ແລ້ວທີ່ຈະນຳສັນຕິສຸກ, ຄວາມຮອດພົ້ນແລະຄວາມຍິນດີມາໃຫ້ພວກລູກນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ